ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 0492
ວັນທີ 06 SEP 2016
ໂທລະສັບ 021 217770

ເລກທີ: 36 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 06 ກັນຍາ 2016

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 22/08/2016 ຫາ 26/08/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນນັກລົງທຶນເລີ່ມມີຄວາມເຊື່ອໝັ້ນຕໍ່ເສດຖະກິດຂອງສະຫະລັດເພີ່ມຂຶ້ນ ພາຍຫຼັງກະຊວງອຸດສະຫະກຳຂອງສະຫະລັດ ອອກມາເປີດເຜີຍຕົວເລກການໃຊ້ຈ່າຍຂອງຜູ້ບໍລິໂພກເພີ່ມຂຶ້ນເປັນເດືອນທີ 4 ຕິດຕໍ່ກັນໃນເດືອນ 7/2016 ເພີ່ມຂຶ້ນ 0,3% ບວກກັບຕົວເລກຄວາມເຊື່ອໝັ້ນທາງດ້ານເສດຖະກິດຂອງຊິງເຂດເອີຣົບ ຫຼຸດລົງ 2 ເດືອນຕິດຕໍ່ກັນ ຈາກ ຫຼຸດລົງ 7,9 ໃນເດືອນ 7/2016 ເປັນ 8,5 ໃນເດືອນ 8/2016.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19/08/2016 | ອາທິດນີ້ 26/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1315 | 1,1287 | 0,25% |
| ໂດລາ/ເຢນ | 100,19 | 100,42 | -0,23% |
| ໂດລາ/ບາດ | 34,630 | 34,560 | 0,20% |
| ໂດລາ/ເປໂຊ | 46,34 | 46,35 | -0,01% |
| ໂດລາ/ຣູເປັຍ | 13.155,00 | 13.205 | -0,38% |
| ໂດລາ/ໂດລາສິງກະໂປ | 1,3456 | 1,3517 | -0,45% |
| ໂດລາ/ປອນ | 6,6512 | 6,6685 | -0,26% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 1,82% ຈາກ 50,60 ໂດລາ/ບາເຣວ ມາເປັນ 49,68 ໂດລາ/ບາເຣວ ເນື່ອງຈາກປະລິມານການຜະລິດນ້ຳມັນຢູ່ໃນຕະຫຼາດສາກົນເພີ່ມຂຶ້ນ ຊຶ່ງເຫັນໄດ້ຈາກປະລິມານນ້ຳມັນໃນຄັງຂອງສະຫະລັດເພີ່ມຂຶ້ນ ຈາກ 2,5 ລ້ານບາເຣວ ໃນວັນທີ 19/8/2016 ມາເປັນ 523,6 ລ້ານບາເຣວ ໃນວັນທີ 25/8/2016. ສຳລັບລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,46% ຈາກ 1.345,66 ມາເປັນ 1.326 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,07% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,08% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,11% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,21% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,75% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,80% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,98% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 2,97% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 19/08/2016 | | | ອາທິດນີ້ 26/08/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.077,68 | 8.100,76 | 8.086,54 | 8.075,91 | 8.108,00 | 8.092,06 | 0,02% | -0,09% | -0,07% |
| ບາດ | 234,75 | 235,74 | 235,59 | 234,29 | 235,98 | 235,33 | 0,19% | -0,10% | 0,11% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.117,47 | 8.143,13 | 8.130,30 | 8.121,60 | 8.151,42 | 8.136,51 | -0,05% | -0,10% | -0,08% |
| ບາດ | 234,97 | 235,87 | 235,42 | 235,49 | 236,32 | 235,90 | -0,22% | -0,19% | -0,21% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,49% | 0,52% | 0,54% | 0,57% | 0,54% | 0,55% | | | |
| ບາດ | 0,09% | 0,05% | -0,07% | 0,51% | 0,14% | 0,24% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,10% ທຽບໃສ່ວັນທີ 19/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 1,02%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,86% ເມື່ອທຽບໃສ່ວັນທີ 19/08/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,83%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 22-26/08/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 53,34 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 82,16 ລ້ານໂດລາ ແລະ ຂາຍໂດລາໄດ້ 28,82 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.128,24 ລ້ານບາດ (ໃນນີ້ ຊື້ບາດໄດ້ 353,13 ລ້ານບາດ ແລະ ຂາຍບາດໄດ້ 1.481,37 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 40,14% ແລະ ເພີ່ມຂຶ້ນ 7,57% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,20 ລ້ານໂດລ້ານ ແລະ ເງິນບາດມີຈຳນວນ 8 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 8,25 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 1 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 4,28 ລ້ານໂດລາ ແຕ່ຊື້ບາດ ຈຳນວນ 0,26 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 15-19/08/2016 | | ອາທິດທີ 22-26/08/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **52,47** | **252,27** | **82,16** | **353,13** | **56,57%** | **39,98%** |
| - ທ/ຄທຸລະກິດລັດ | 11,64 | 147,43 | 12,92 | 155,08 | 11,00% | 5,19% |
| - ທ/ຄທຸລະກິດອື່ນໆ | 40,83 | 104,83 | 69,24 | 198,04 | 69,56% | 88,91% |
| 2. ການຂາຍເງິນຕາຕ່າງປະເທດ | **26,71** | **1.453,20** | **28,82** | **1.481,37** | **7,88%** | **1,94%** |
| - ທ/ຄທຸລະກິດລັດ | 14,80 | 176,33 | 13,62 | 180,26 | -7,97% | 2,23% |
| - ທ/ຄທຸລະກິດອື່ນໆ | 11,92 | 1.276,87 | 15,20 | 1.301,11 | 27,56% | 1,90% |
| ຊື້-ຂາຍສຸດທິ ທທກ | **25,76** | **-1.200,93** | **53,34** | **-1.128,24** | **107,08%** | **-6,05%** |
| ຜິດດ່ຽງ ຊື້-ຂາຍ | 49,09% | -476,05% | 64,92% | -319,50% | 32,26% | -32,89% |
| ມູນຄ່າການຊື້-ຂາຍ | **79,19** | **1.705,47** | **110,98** | **1.834,49** | **40,14%** | **7,57%** |
| 3. ການຊື້ຂາຍລະຫວ່າງທຫລ ກັບ ທທກ | **-9,36** | **-4,00** | **-8,25** | **-1,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,36 | 4,00 | 8,25 | 1,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,70** | **9,94** | **0,20** | **8,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0,17** | **0,52** | **-4,28** | **0,26** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,17 | 0,52 | 0,04 | 0,31 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,00 | 0,00 | 4,31 | 0,05 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 08/2016 ຢູ່ໃນລະດັບ 2,15% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,18% ຈາກ 1,97% ໃນເດືອນ 07/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 85,20 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 85,3 ທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 641 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 32,24% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 308,95 ຕື້ກີບ ຫຼຸດລົງ 16,79% ເມື່ອທຽບໃສ່ອາທິດຜ່ານມາ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (19-25/08/2016) ມີຈໍານວນ 1.938 ຄັ້ງ ໂດຍມີມູນຄ່າ 382,43 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 504 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 994,18 ຈຸດ ຫຼຸດລົງ 0,99% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 290.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.344 ລ້ານກີບ ເພີ່ມຂຶ້ນ 41,90% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 77,27% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.612 ກີບ/ຮຸ້ນ ຫຼຸດລົງ 88 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 73.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 338,99 ລ້ານກີບ ເພີ່ມຂຶ້ນ 3.178,48% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 47,26% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.901 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 191.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 938,45 ລ້ານກີບ ຫຼຸດລົງ 21,49% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 80,43% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 20.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 51,50 ລ້ານກີບ ຫຼຸດລົງ 4,24% ຂອງ PTL. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 15,50 ລ້ານກີບ ເພີ່ມຂຶ້ນ 4,900% ເມື່ອທຽບໃສ່ອາທິດທີ່ຜ່ານມາ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການ: ❶ເຂົ້າຮ່ວມກອງປະຊຸມວຽກງານຈັດຕັ້ງທົ່ວປະເທດຄັ້ງທີ 10 ທີ່ຫ້ອງວ່າການສູນກາງພັກ, ❷ເຂົ້າຮ່ວມກອງປະຊຸມລັດຖະບານປະຈໍາເດືອນ ສິງຫາ 2016 ທີ່ສໍານັກງານນາຍົກລັດຖະ ມົນຕີ, ❸ຮັບການເຂົ້າຢ້ຽມຂໍານັບ ຈາກທ່ານ Hugh Evans ທູດອັງກິດ ແລະ ຜູ້ບໍລິຫານທະນາຄານ Standard Chartered ທີ່ ທຫລ;

- ສໍາເລັດການຈັດ: ❶ກອງປະຊຸມຄະນະກໍາມະການລະບົບຊໍາລະອາຊຽນ ຄັ້ງທີ 14 (14th Meeting of the Working Committee on Payment and Settlement System ທີ່ ໂຮງແຮມ ລາວພລາຊາ, ❷ກອງປະຊຸມໜ່ວຍງານວິຊາການເພື່ອປະສານງານກ່ຽວກັບການຕ້ານການຟອກເງິນ (AML Working Group) ເພື່ອຮັບຟັງການລາຍງານກ່ຽວກັບບົດລາຍງານ

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ຄວາມຄືບໜ້າ ເພື່ອແກ້ໄຂຂໍ້ບົກຜ່ອງຂອງ ສປປ ລາວ ແລະ ປຶກສາຫາລືບັນຫາທີ່ຄົງຄ້າງທີ່ສາກົນໄດ້ເຈາະຈີ້ມ ເພື່ອຫາວິທີແກ້ໄຂ ທີ່ ທຫລ, ❸ກອງປະຊຸມເຜີຍແຜ່ວຽກງານກອງທຶນ FIF ທີ່ໂຮງແຮມດອນຈັນພາເລດ;

- ສຳເລັດການເຂົ້າຮ່ວມ: ❶ຝຶກອົບຮົມ ໃນຫົວຂໍ້ "Bank and Payment System" ທີ່ປະເທດກຳປູເຈຍ, ❷ສຳມະນາລະດັບພາກພື້ນກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບ APG ແລະ ໜ່ວຍງານຂໍ້ມູນຂ່າວກອງທາງດ້ານການເງິນ ສ. ເກົາຫຼີ ທີ່ ສ.ເກົາຫຼີ.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ຮັບແຂກທະນາຄານ ມາຣູຮານເຈແປນ ທີ່ ທຫລ, ❷ເຂົ້າລາຍງານຕໍ່ກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ທີ່ຫ້ອງວ່າການສູນກາງພັກ, ❸ເປັນປະທານກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ສິງຫາ 2016 ທີ່ ທຫລ, ❹ເຂົ້າຮ່ວມກອງປະຊຸມຄະນະ ຄຄຊ ທີ່ ທຫລ, ❺ເຂົ້າຮ່ວມກອງປະຊຸມຄະນະ NCC ທີ່ ທຫລ, ❻ເຂົ້າຮ່ວມຮັບຟັງປະຖະກະຖາ ວັນລັດຖະທຳມະນູນແຫ່ງ ສປປ ລາວ ຄົບຮອບ 2 ປີ ທີ່ຫ້ອງວ່າການສູນກາງພັກ, ❼ເຂົ້າຮ່ວມຢ້ຽມຢາມແລກປ່ຽນບົດຮຽນກ່ຽວກັບວຽກງານກຳມະບານກັບຫວຽດນາມ ທີ່ ສສ. ຫວຽດນາມ, ❽ໄປເຄື່ອນໄຫວວຽກງານຢູ່ພາກເໜືອ ແຂວງຊຽງຂວາງ ແລະ ແຂວງຫົວພັນ, ❾ເຂົ້າຮ່ວມກອງປະຊຸມລະດົມຄວາມຄິດ ກ່ຽວກັບຮ່າງຂໍ້ຕົກລົງ 4 ສະບັບ ຕິດພັນກັບວຽກງານຫລັກຊັບ ທີ່ ທຫລ;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;

- ສືບຕໍ່ສ້າງປື້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;

- ສືບຕໍ່: ❶ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016, ❷ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016;

- ສືບຕໍ່ກະກຽມເນື້ອໃນສຳລັບການສຳມະນາລະດັບສູງ SEACEN-BIS ແລະ ກອງປະຊຸມປະຈຳປີລະດັບຮອງຜູ້ວ່າການ SEACEN EXCO ຄັ້ງທີ 15 ທີ່ປະເທດຟີລິບປິນ;

- ກອງປະຊຸມພົບປະໂອ້ລົມຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ເພັດສະຖາພອນ ແກ້ວວົງວິຈິດ